ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lao Traditional Literature

## Lecture 10: Miracle Stories (Con.)

**Lecturer: Somthapheuy SYVONGSAK**

**Academic Year 2023-2024**

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີພື້ນເມືອງລາວ
**ລະຫັດ:** 0907108
**ບົດທີ 4:** ນິທານມະຫັດສະຈັນ (ຕໍ່) ເວລາ: 90 ນາທີ
**ຜູ້ບັນຍາຍ:** ອຈ.ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 1
**ສົກຮຽນ:** 2023-2024

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goals):<br>ນັກຮຽນຈະຮູ້:<br>- ເລື່ອງ "ກຳພ້າຜີນ້ອຍ"<br>- ເລື່ອງ "ພູທ້າວພູນາງ"</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈ:<br>- ເລື່ອງ "ກຳພ້າຜີນ້ອຍ"<br>- ເລື່ອງ "ພູທ້າວພູນາງ"</td><td>ຄຳຖາມຫຼັກ (Questions):<br>1) ເລື່ອງ "ກຳພ້າຜີນ້ອຍ" ມີເນື້ອໃນແນວໃດ?<br>2) ເລື່ອງ "ພູທ້າວພູນາງ" ມີເນື້ອໃນແນວໃດ?</td></tr>
<tr><td>ຄວາມຮູ້ (Knowledge):<br>- ໃຫ້ນັກຮຽນຮູ້ໄດ້ເຖິງເນື້ອໃນຂອງເລື່ອງ ກຳພ້າຜີນ້ອຍ ແລະເລື່ອງ ພູທ້າວພູນາງ.</td><td>ທັກສະ (Skills):<br>- ອະທິບາຍໄດ້ເຖິງເນື້ອໃນຂອງເລື່ອງ ກຳພ້າຜີນ້ອຍ ແລະເລື່ອງ ພູທ້າວພູນາງ.</td></tr>
<tr><td colspan="2">ຂັ້ນຕອນ 2 - ຫຼັກຖານປະເມີນ</td></tr>
<tr><td>ໜ້າວຽກສິດສອນ (Tasks):<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ</td><td>ຫຼັກຖານອື່ນໆ (Other Evidence):<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ</td></tr>
<tr><td colspan="2">ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)</td></tr>
<tr><td colspan="2">- ສື່ການສອນມີ:<br>ປຶ້ມຕຳລາວິຊາວັນນະຄະດີພື້ນເມືອງລາວ, ປຶ້ມວັນນະຄະດີລາວ, ວັນນະຄະດີພື້ນເມືອງ1, ວັນນະຄະດີຊັ້ນມັດທະຍົມປີທີ4, ວັນນະຄະດີຊັ້ນມັດທະຍົມປີທີ5, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD, ໃບກິດຈະກຳ.<br>- ກິດຈະກຳການຮຽນ</td></tr>
</table>

**I. ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**
- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງ ຄວາມໝາຍ, ຈຸດພິເສດ, ການກຳເນີດ, ເນື້ອໃນ ແລະສິລະປະ ຂອງນິທານມະຫັດສະຈັນ.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 4**

**ນິທານມະຫັດສະຈັນ (ຕໍ່)**

**5. ເລື່ອງ "ກຳພ້າຜີນ້ອຍ"** ( 35 ນາທີ )

**ກິດຈະກຳ 1:**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປື້ມຕຳລາ
  1) ເລື່ອງ "ກຳພ້າຜີນ້ອຍ" ມີເນື້ອໃນແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (30 ນາທີ)

ໃນປາງກ່ອນ ທີ່ເມືອງອິນທະປັດຖະນະຄອນ ຍັງມີເດັກນ້ອຍຊາຍຄົນໜຶ່ງ ພໍອາຍຸໄດ້ເຈັດປີພໍ່ແມ່ໂຄດວົງຕາຍໝົດ. ທ້າວຕ້ອງໄດ້ທ່ຽວຂໍທານກິນ. ມື້ໜຶ່ງກວານບ້ານໄດ້ວາງແຜນໃຫ້ທ້າວໄປເຮັດນາຢູ່ບ່ອນເຂັດຂວາງ ຫວັງໃຫ້ທ້າວຕາຍ, ໂດຍເວົ້າຍົວະວ່າ ທີ່ນັ້ນເປັນບ່ອນສົມບູນຫຼາຍ. ທ້າວ ຈຶ່ງຕອບວ່າ:

- ຖ້າແມ່ນຄວາມເມດຕາຂອງລຸງແລ້ວ ຫຼານກໍຖືວ່າເປັນບຸນຄຸນຢ່າງລົ້ນເຫຼືອແທ້ແລ້ວ ລຸງເອີຍ.

ເຫັນວ່າທ້າວຕົກລົງດັ່ງນັ້ນ ກວານບ້ານຈຶ່ງຫາພ້າ, ມີດ, ຈົກ ແລະ ສຽມ ທີ່ໃຊ້ການບໍ່ໄດ້ແລ້ວ ມອບໃຫ້ທ້າວ, ຮຸ່ງຂຶ້ນວັນໃໝ່ ຈຶ່ງພາໄປຊີ້ບ່ອນໃຫ້. ກ່າວເຖິງຜີຍ່າງ່າມ, ເມື່ອເຫັນທ້າວມາຢູ່ຫັ້ນກໍຄິດວ່າຈະກິນ ແຕ່ກໍກິນບໍ່ໄດ້ຍ້ອນເທວະດາແປດອົງຮັກສາຢູ່. ເທວະດາຍັງສັ່ງສອນຜີຍ່າງ່າມ ໃຫ້ເບິ່ງແຍງຮັກສາທ້າວ, ຜີຍ່າງ່າມກໍຮັບປາກທຸກຢ່າງ.

ຢູ່ຕໍ່ມາ ເມື່ອທ້າວກຳພ້າລົງມືຖາງໄຮ່ ບັນດາຜີທັງຫຼາຍກໍມາຊ່ວຍ ຈົນໄດ້ໄຮ່ພືນໜາ, ນາພືນກວ້າງ. ພໍເຖິງເດືອນສິບເຂົ້າກໍມານເຕັມໄຮ່ນາ ປາກໍມາອັ່ງຕ້ອນ, ທ້າວ ກຳພ້າໄດ້ໄປໃສ່ສ້ອນ ແລະ ໄຊ. ແຕ່ໄປຢາມມື້ໃດກໍເຫັນແຕ່ຫອຍຄົນມາລັກຢາມກ່ອນ. ທ້າວຈຶ່ງໄປເລົ່າທຸກຕໍ່ຜີຍ່າງ່າມ, ຜີຍ່າງາມໄດ້ຫຼົກຜົມໃຫ້ທ້າວເສັ້ນໜຶ່ງເພື່ອເຮັດສາຍແຮ້ວ ທ້າວກຳພ້າກໍໄດ້ປະຕິບັດຕາມຜີຍ່າງາມບອກທຸກຢ່າງ. ພໍວັນຮຸ່ງຂຶ້ນຈຶ່ງໄປຢາມ ເຫັນຜີນ້ອຍຕິດບ້ວງຢູ່. ຜີນ້ອຍໄດ້ຂໍຊີວິດໄວ້ ແລະ ຂານອາສາຮັບໃຊ້ທ້າວຕະຫຼອດໄປ. ຕໍ່ໆມາແຮ້ວກໍຖືກເຫງັນມອນ, ເສືອ, ຊ້າງ, ມ້າ, ຮຸ້ງ ແລະ ນາກອີກ. ຈຳພວກສັດເຫຼົ່ານີ້ກໍຂໍຊີວິດນຳທ້າວຄືກັນ ແລະ ຂໍຮັບໃຊ້ຕະຫຼອດການ.

ຕໍ່ມາອີກ ເມື່ອເຂົ້າສຸກເຫຼືອງ ພະຍາຊ້າງພ້ອມດ້ວຍຝູງ ໄດ້ກິ່ນເຂົ້າ ຈຶ່ງພາກັນມາກິນ ທັງຢຽບຢໍ່າ ເສຍຫາຍບາງສ່ວນ ທ້າວຈຶ່ງເອົາແຮ້ວໄປໃສ່ໄວ້ອີກ. ພະຍາຊ້າງໄດ້ຖືກແຮ້ວຂອງທ້າວ ທ້າວ ວ່າຊິຂ້າແຕ່ຊ້າງກໍໄດ້ຂໍຊີວິດໄວ້ ແລະ ຍັງມອບງາທັງສອງໃຫ້ໂດຍບອກວ່າ:

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ທ້າວເອີຍ! ເພື່ອຕອບບຸນແທນຄຸນເຈົ້າ ຂ້ອຍຂໍມອບງາທັງສອງໃຫ້ ຖ້າຕ້ອງການເຂົ້າຂອງວັດຖຸເງິນຄຳໃຫ້ປາຖະໜາເອົາຈາກງາກ້ຳຊ້າຍນີ້, ສ່ວນງາກ້ຳຂວາໃຫ້ປ້ອງຂ້າງນອນ ແລ້ວລູກຈະມີຄວາມອົບອຸ່ນດອກ. ແຕ່ກ່ອນຈະເອົາງານີ້ໄດ້ໃຫ້ໄປຂໍເອົາຜົມຍ່າງ່າມມາຕັດເອົາ.

ທ້າວກໍໄດ້ເຮັດຕາມຄຳແນະນຳ ພໍໄດ້ແລ້ວ ຈຶ່ງນຳເອົາງາຄູ່ນັ້ນມາໄວ້ ແລ້ວກໍອອກໄປເຮັດວຽກຕາມເຄີຍ.

ກ່າວເຖິງສະພາບທາງຕູບນ້ອຍ, ທຸກເທື່ອທີ່ທ້າວກັບມາແຕ່ວຽກ ພໍຂຶ້ນເມືອຕູບກໍເຫັນພາເຂົ້າຕັ້ງໄວ້ຖ້າຢ່າງຄົບຖ້ວນ. ຍ້ອນຄວາມຫິວ ທ້າວນຶກວ່າຊິກິນໂລດ. ແຕ່ຜີນ້ອຍໄດ້ຫ້າມໄວ້ກ່ອນເພາະມັນເປັນເລື່ອງທີ່ແປກປະຫຼາດທີ່ສຸດ ເພື່ອໃຫ້ຫາຍສົງໄສ. ມື້ໜຶ່ງ, ທ້າວຈຶ່ງຈອບເບິ່ງ ໂດຍທຳທ່າຊວນຜີນ້ອຍໄປທ່ຽວຄືເກົ່າ. ຂະນະທີ່ຈອບຢູ່ນັ້ນ ໄດ້ເຫັນນາງສາວງາມທີ່ສຸດຜູ້ໜຶ່ງຄານອອກມາຈາກງາຊ້າງ ນາງໄດ້ປັດກວາດມ້ຽນເຮືອນ ພໍເສັດແລ້ວ ກໍແຕ່ງພາເຂົ້າໄວ້ຈາກນັ້ນກໍເຂົ້າໄປຢູ່ງາຄືເກົ່າ. ເມື່ອເຫັນແນວນັ້ນທ້າວຈຶ່ງມີຄວາມດີໃຈທີ່ສຸດ. ມື້ລຸນມາ, ພາຍຫຼັງທີ່ໄດ້ປຶກສາກັບຜີນ້ອຍແລ້ວ ທ້າວກໍທຳທ່າຊວນຜີນ້ອຍໄປໄຮ່ແລ້ວກໍ່ຈອບເບິ່ງອີກ. ພໍນາງອອກມາ ເຫັນວ່າໄດ້ໂອກາດ ຈຶ່ງແລ່ນເຂົ້າໄປຕັນປາກງາໄວ້ຈາກນັ້ນກໍ່ຖາມກົກປາຍສາເຫດນາງຈຶ່ງຕອບວ່າ:

ນ້ອງນີ້ ຄາດແຕ່ຟ້າຫົວຮ່ວມຮຽງໝອນ ຄາດໄດ້ເປັນຄູ່ຊ້ອນ ມິ່ງຂວັນຂອງອ້າຍຈຶ່ງໄດ້ຈອນມາຜ້າຍ ເຊົາເຮືອນທຽມພ່າງ ນ້ອງນີ້ເຊື້ອລູກຊ້າງ ງາລ້ຳເລີດຄຸນນັ້ນແລ້ວ. ເມື່ອຊັກໄລ່ໄຕ່ຖາມກັນເປັນທີ່ເຂົ້າໃຈແລ້ວ ທັງສອງຈຶ່ງຕົກລົງຮ່ວມຊີວິດນຳກັນຕໍ່ໄປ.

ກ່າວເຖິງຊາວເມືອງ ເມື່ອບໍ່ເຫັນທ້າວເຂົ້າມາຂໍເຂົ້າເປັນເວລາດົນນານ ຄິດວ່າທ້າວຕາຍແລ້ວຈຶ່ງພາກັນໄປຈອບເບິ່ງ ເຫັນທ້າວກ່ຳພ້າໄດ້ເມຍງາມທີ່ສຸດ. ເຂົ້າກໍເຕັມເລົ້າ ເຕັມເຍຍ, ເຄື່ອງປູກຂອງຝັງກໍເຕັມໄຮ່ເຕັມສວນກວ້າງສຸດສາຍຕາ ບໍ່ອຶດຢາກຈັກແນວ. ຂ່າວນັ້ນ, ຈຶ່ງຊາລືໄປຮອດພະຍາ, ພະຍາຍັງບໍ່ເຊື່ອວ່າຈະເປັນໄປໄດ້ ເພື່ອໃຫ້ແນ່ໃຈຈຶ່ງໃຫ້ອາມາດຜູ້ໃກ້ຊິດໄປຕິດຕາມເບິ່ງ ເຫັນວ່າເປັນຄວາມຈິງຈຶ່ງກັບມາລາຍງານອີກ. ພໍຮູ້ດັ່ງນັ້ນ, ພະຍາຈຶ່ງສັ່ງໃຫ້ຮ້ອງເອົາທ້າວກ່ຳພ້າມາພົບ ເມື່ອທ້າວມາພະຍາຈຶ່ງຂູ່ວ່າ:

ບັກກ່ຳພ້າ ຈຸດປະສົງທີ່ກູເອີ້ນມຶງມານີ້ກໍມີຢູ່ວ່າ ມຶງເປັນກ່ຳພ້າກຳພອຍບໍ່ສົມຄວນເລີຍທີ່ມຶງຈະມີເມຍງາມແນວນັ້ນ ເພື່ອບໍ່ໃຫ້ມີຄວາມຮຸນແຮງ ກູຈຶ່ງຂໍເວົ້າກັບມຶງໂດຍດີວ່າ: ເມຍມຶງນັ້ນຍົກໃຫ້ກູໂດຍດີສາ ມັນຈຶ່ງຊິສົມກັບພະຍາມະຫາກະສັດຄືກູ. ເວົ້າສຸດກໍສົ່ງສຽງຫົວທ້າທາຍແບບຜູ້ມີອຳນາດດັງ ຮ່ຳ ຮ່ຳ.....ຮ່ຳ ອອກມາ. ຝ່າຍທ້າວເມື່ອໄດ້ຍິນວ່າ: ເອົາເມຍມຶງມາໃຫ້ກູ ນ້ຳຕາແຫ່ງຄວາມຄຽດແຄ້ນກໍຄ່ອຍໆໄຫຼຊຶມອອກມາຈາກເບົ້າຕາທັງສອງ ແລະ ໄດ້ເວົ້າວ່າ:

ເຫດໃດພໍ່ພະຍາຊ່າງມາເວົ້າແນວບໍ່ແມ່ນຄວາມແທ້ ຂ້ານ້ອຍກ່ຳພ້າກ່ຳພອຍຢູ່ ແຕ່ລູກເມຍຂ້ານ້ອຍກໍຮັກຄືແກ່ນຕາ, ຄັນເອົາສິ່ງຂອງວັດຖຸເງິນຄຳ, ເສື້ອຜ້າແຜ່ນແພແນວໃດແນວອື່ນ ກໍຍັງໄຄແດ່ ອັນນີ້ຈັ່ງໃດພັດມາວ່າໃຫ້ຂ້ານ້ອຍຍົກເມຍໃຫ້ຈັ່ງຊີ ແນວໃດຂ້ານ້ອຍກໍບໍ່ໃຫ້ດອກ.

ເມື່ອພະຍາໄດ້ຟັງເຫດຜົນຂອງກ່ຳພ້າຫຼາຍຢ່າງຫຼາຍແນວ ກໍໄດ້ຍຸດນິ້ງໄລຍະໜຶ່ງ ເພື່ອຄົ້ນຄ້ວາຄິດຫາວິທີການທີ່ແນບນຽນກ່ວານັ້ນ, ໃນທັນໃດພະຍາຈຶ່ງກັບປ່ຽນບັນຍາກາດໃໝ່ວ່າ:

ເອົາ! ຄັນຈັ່ງຊັ້ນ ເຮົາມາພະນັນກັນຕີໄກ່, ຖ້າໄກ່ມຶງແພ້ ກູຈະຍົກເມືອງໃຫ້ມຶງເຄິ່ງໜຶ່ງໂລດ, ແຕ່ຖ້າໄກ່ກູແພ້ມຶງຕ້ອງຍົກເມຍມຶງໃຫ້ກູ. ວ່າຈັ່ງໃດກ່ຳພ້າ ວິທີນີ້ເປັນທຳແລ້ວບໍ່? ພະຍາໄດ້ເວົ້າຂຶ້ນດ້ວຍສຽງຫົວສະອິດສະອ້ອຍຢ່າງທ້າທາຍແບບເຊື່ອໝັ້ນໃນໄຊຊະຂອງຕົນເອງ.

ໄດ້ຍິນຄຳວ່າ: “ພະນັນ” ພ້ອມທັງກະຕິກາ. ຊາຍກ່ຳພ້າກໍຈົນປັນຍາ ເພາະໄກ່ຕົວໜຶ່ງກໍບໍ່ມີ ເຮັດແນວໃດຈຶ່ງຈະຫາໄກ່ມາຕີເອົາຊະນະໄກ່ພະຍາໄດ້ ແລະ ການທີ່ຕົນຈະປະຕິເສດກັບພະຍາໄດ້ ກໍຢູ່ໃນວົງຈຳກັດຮັດແຄບທີ່ສຸດ ເຂົາຈຳຕ້ອງກົ້ມໜ້າຟາຍນ້ຳຕາ ເອົາຄວາມລະທົມຂົມຂື່ນທັງໝົດມຸ່ງໜ້າສູ່ກະຕູບນ້ອຍ ແລະ ເມຍຂວັນ. ພໍເມຍເຫັນທ້າວໂສກເສົ້າເຊັ່ນນັ້ນ ກໍຈຶ່ງຖາມຫາສາເຫດ ທ້າວຈຶ່ງເລົ່າຄວາມເປັນໄປທັງໝົດສູ່ເມຍຟັງ ເມຍຈຶ່ງບອກວ່າ:

ອ້າຍກ່ຳພ້າເອີຍ! ອ້າຍບໍ່ຕ້ອງໂສກເສົ້າເສຍໃນຫຍັງເລີຍ ຄັນຊັ້ນໃຫ້ອ້າຍໄປຮ້ອງຫາເຫງັນມອນຕົວຖືກແຮ້ວມື້ນັ້ນ ແລ້ວເລົ່າເຫດການຕ່າງໃຫ້ຟັງ ລາວກໍຈະມີວິທີຊ່ວຍອ້າຍດອກ. ທ້າວໄດ້ຍິນແນວນັ້ນກໍເບົາໃຈລົງແດ່, ຈາກນັ້ນກໍໄປຮ້ອງ ຫາເຫງັນມອນ ເຫງັນມອນຈຶ່ງອາສາແປງເພດເປັນໄກ່.

ພໍຮຸ່ງເຊົ້າຊາຍກ່ຳພ້າກໍອູ້ມໄກ່ເຂົ້າເມືອງ, ພໍໄດ້ເວລາການຕີໄກ່ກໍເລີ່ມຕົ້ນ ພະຍາທີ່ເບິ່ງຢູ່ກໍມີຄວາມດີໃຈຫົວສະອິດສະອ້ອຍແລ້ວກໍເວົ້າວ່າ:

ບັກກ່ຳພ້າເອີຍ! ຈັ່ງແມ່ນມຶງໂງ່ນໍ ກູຂໍເມຍມຶງດີໆ ມຶງຍັງບໍ່ຍອມໃຫ້ ພັດຍັງບໍ່ພໍ ເສຍທັງເມຍທັງໄກ່ຊັ້ນບໍ?ເວົ້າແລ້ວກໍຕົບແຂ່ງຕົບຂາ ໄກ່ຕີກັນໄປເລື່ອຍໆ. ພວກອຳມາດທີ່ຢູ່ໃກ້ຊິດກໍເວົ້າເປັນສຽງດຽວກັນວ່າ: ໄກ່ທ້າວກ່ຳພ້າຊິຕາຍແລ້ວ, ແຕ່ເວົ້າບໍ່ທັນສຸດສຽງ ໄກ່ທ້າວກ່ຳພ້າກໍໂດດເຂົ້າໄປເຕະໄກ່ພະຍາຈົນຄໍຫັກກັບບ່ອນ. ພ້ອມທັງສຽງຕົບມືຜືຜ້າຂອງປະຊາຊົນຜູ້ຊົມ ພະຍາກໍມີຄວາມອັບອາຍຂາຍໜ້າ ແລະ ໂກດແຄ້ນທີ່ສຸດ. ເມື່ອໄກ່ຕົນບໍ່ແພ້ ແທນທີ່ຈະຍົກເມືອງໃຫ້ທ້າວກ່ຳພ້າຕາມກະຕິກາ ຊ້ຳພັດຍັງລົບລົ້ນປິ້ນຄວາມຢ່າງໜ້າເລືອດທີ່ສຸດ. ໂດຍບອກໃຫ້ທ້າວເອົາຄວາຍມາຊົນກັນອີກ ໃນມື້ອື່ນ. ທ້າວກຳພ້າຈຶ່ງກົ້ມໜ້າເມືອເຮືອນດ້ວຍຄວາມຄຽດແຄ້ນທີ່ສຸດ ແລ້ວກໍເລົ່າເຫດການຕ່າງໆໃຫ້ເມຍຟັງອີກ ເມຍກໍແນະນຳໃຫ້ໄປຮ້ອງຫາເສືອ ເສືອໄດ້ແປງເພດເປັນຄວາຍ ແລ້ວທ້າວຈຶ່ງນຳຄວາຍໄປຊົນກັບຄວາຍພະຍາ ແລ້ວຄວາຍພະຍາກໍຕາຍອີກ. ແຕ່ພະຍາກໍຍັງບໍ່ຍອມ ສັ່ງໃຫ້ເອົາຊ້າງມາຊົນອີກ ຊ້າງພະຍາກໍຕາຍເພາະຊ້າງຂອງຊາຍກ່ຳພ້າແມ່ນຊ້າງນ້ຳແປງເພດ.

ເມື່ອໄກ່, ຄວາຍ ແລະ ຊ້າງຕາຍ ພະຍາກໍຍັງບໍ່ຍອມ ຍັງຂູຊິເອົາເມຍທ້າວໃຫ້ໄດ້ແລ້ວຈຶ່ງເວົ້າກັບທ້າວວ່າ:

ບັກກ່ຳພ້າ! ດຽວນີ້ ມຶງມີໂທດກຳຫຼາຍແລ້ວ, ຍ້ອນມຶງນີ້ເອງ ໄກ່, ຄວາຍ ແລະ ຊ້າງ ພະທີ່ນັ່ງຂອງກູຈຶ່ງຕາຍເພື່ອປະກັນເອົາຊີວິດມຶງໄວ້ ມຶງຕ້ອງກິນຊີ້ນສັດທັງສາມຢ່າງນີ້ໃຫ້ໝົດໃນມື້ດຽວ ບໍ່ດັ່ງນັ້ນຈະຖືກຕັດຄໍ!

ທ້າວໄດ້ຍິນດັ່ງນັ້ນ ກໍສຸດທີ່ຄຽດແຄ້ນ ແຕ່ກໍເປັນສິ່ງເຫຼືອວິໄສ ທີ່ຈະຕອບໂຕ້ທວງຄືນຕໍ່ຜູ້ທີ່ມີອຳນາດບາດໃຫຍ່ໄຮ້ມະນຸດສະທຳ. ທ້າວຈຳຕ້ອງກັບເມືອ ແລ້ວປຶກສາກັບເມຍ. ເຖິງມື້ໃໝ່ຈຶ່ງເອີ້ນເອົາຮຸ້ງມາ, ພາຍຫຼັງທີ່ໄດ້ວາງແຜນການລະອຽດ ແລະ ຕົກລົງຈົນເປັນທີ່ເຂົ້າໃຈກັບຮຸ້ງແລ້ວ ທ້າວກໍ່ເຂົ້າໄປໃນວັງກ່ອນ. ພໍເຖິງເວລາ ພະຍາຮຸ້ງພ້ອມດ້ວຍບໍລິວານຈຶ່ງເລື່ອມຕາລົງມາກິນຊີ້ນນັ້ນຈົນໝົດ ແລ້ວກໍ່ບິນກັບຄືນ.

ເມື່ອພະຍາເຫັນວ່າທ້າວກ່ຳພ້າກິນຊີ້ນໝົດ ກໍຍັງສືບຕໍ່ລົບລົ້ນປິ້ນຄວາມ ບໍ່ຍອມປະຕິບັດຕາມກົດກະຕິກາທີ່ວາງໄວ້ ຊ້ຳບໍ່ພໍຍັງບັງຄັບໃຫ້ທ້າວຫາເຮືອມາຊ່ວງກັນອີກ ໂດຍນຳເອົາຈິດໃຈກະຕິກາອັນເກົ່າ. ທ້າວກໍຈຳໃຈຮັບປາກແລ້ວນຳເມືອປຶກສາກັບເມຍ. ພໍຮຸ່ງເຊົ້າມາທ້າວຈຶ່ງເອີ້ນເອົານາກ, ນາກໄດ້ແປງຕົວເປັນເຮືອ ໄປຊ່ວງກັບພະຍາ ໂດຍແມ່ນທ້າວກ່ຳພ້າຜູ້ດຽວເປັນສີພາຍ. ເຖິງຈະອອກເຫື່ອເທແຮງ ສຸມໝົດຈິດໝົດໃຈ ເຮືອຂອງພະຍາຍັງເອົາຊະນະເຮືອຂອງທ້າວກ່ຳພ້າບໍ່ໄດ້ ສຸດທ້າຍກໍຫຼົ້ມ ພະຍາເລີຍຕາຍໄປ, ເມື່ອພະຍາຕາຍໄປແລ້ວ ກໍຍັງໄດ້ເກີດເປັນແຖນອີກ. ແຕ່ດ້ວຍຈິດວິນຍານທີ່ເຕັມໄປດ້ວຍຄວາມອະທຳ, ອາຄາດພະຍາບາດ ແລະ ອິດສາບັງບຽດຢາກໄດ້ເມຍຂອງກ່ຳພ້າ

ພະຍາກໍຍັງສືບຕໍ່ລົງມາຕໍ່ສູ້ກັບທ້າວກໍ່າພ້າອີກ, ສູ້ໄປສູ້ມາ ສຸດທ້າຍກໍເລີຍຖືກບ້ວງທ້າວກໍ່າພ້າ. ທ້າວກໍ່າພ້າໄດ້ປ່ອຍຕົວໄປ ແທນທີ່ພະຍາຈະຍອມ ເມື່ອຂຶ້ນໄປແລ້ວກໍຍັງເອີ້ນສັດທຸກຈຳພວກມາໂຮມກັນອີກແລ້ວກໍຖາມສັດແຕ່ລະຊະນິດວ່າ:

ບັນດາສັດນ້ອຍໃຫຍ່ທັງຫຼາຍ ພວກເຈົ້າມີໃຜແດ່ທີ່ສາມາດລົງນຳເອົາຂວັນເມຍບັກກໍ່າພ້າຢູ່ເມືອງລຸ່ມມາໃຫ້ກູໄດ້?

ໄດ້ມີສັດສີ່ຈຳພວກຂານອາສາຄື: ແມງງອດ, ງູເຫົ່າ, ນົກເຄົ້າ ແລະ ບາງລື້ອ. ເມື່ອຮັບປາກແລ້ວກໍໄດ້ວາງໜ້າທີ່ ແລະ ແຜນການຢ່າງລະອຽດ. ເວລາປະຊຸມແບ່ງປັນໜ້າທີ່ກັນນັ້ນ ຜີນ້ອຍກໍໄດ້ຈອບຟັງ ແລະ ຮູ້ແຜນການລະອຽດແລ້ວຈຶ່ງຮີບກັບລົງມາບອກເອື້ອຍໃຟ້ວ່າ:

ແຕ່ນີ້ຕໍ່ໄປ ເອື້ອຍບໍ່ຕ້ອງລຸກໜຶ້ງເຂົ້າ, ທຸກສິ່ງທຸກຢ່າງນ້ອງຈະຮັບພາລະຈົນກວ່າທຸກສິ່ງທຸກຢ່າງຈະຮຽບຮ້ອຍເອງ, ພໍຮຸ່ງເຊົ້າມາຜີນ້ອຍກໍລຸກແຕ່ເດິກແລ້ວກໍຈັດການຂ້າແມງງອດທີ່ຢູ່ດົ້ນຟືນ, ງູເຫົ່າທີ່ລີ້ຢູ່ໝໍ້ໜຶ້ງ ແລະ ນົກເຄົ້າທີ່ຈັບຢູ່ປາຍຊານ ເປັນລຳດັບຕໍ່ມາ.

ເປັນອັນວ່າ ສັດທັງສາມໄດ້ຕາຍໝົດ ຍັງແຕ່ບ່າງລື້ອທີ່ສາມາດຮ້ອງເອົາຂວັນນາງຂຶ້ນໃຫ້ພະຍາແຖນໄດ້. ແຕ່ຍ້ອນຄວາມພະຍາຍາມອັນສະຫຼາດຄ້ອງແຄ້ວຂອງຜີນ້ອຍ, ຜີນ້ອຍຈຶ່ງໄດວາງແຜນຫຼອກບ່າງລື້ອໂດຍເອົາໃບໄມ້ມາສານເຮັດຂ້ອງໃຫ້ບ່າງລື້ອເຫັນ, ບ່າງລື້ອສົນໃຈກໍ່ເລີຍຖາມວ່າ:

- ສ່ຽວແມ່ນໂຕເຮັດຫຍັງຄືມາຂະໜຸກຂະໜຸ້ຍແທ້?
- ໂອຍ! ສ່ຽວເອີຍເຮົາວ່າຊິສານອູ່ ( ຜີນ້ອຍຕອບ )
- ອູ່ຫຍັງ ຄືເຮັດແນວນີ້? ( ບ່າງຖາມ )
- ອູ່ຂ້າງບ່ອງ ( ຜີນ້ອຍຕອບ )

ພໍສານສຳເລັດຜີນ້ອຍຈຶ່ງເວົ້າວ່າ:

- ສ່ຽວ! ເຮົາຂໍເພິ່ງໂຕ ເຂົ້າຢັບຂ້າງທາງໃນໃຫ້ເຮົາແດ່ວ່າ ມັນຊິແໜ້ນໜາດີຢູ່ບໍ່?
- ໄດ້! ບ່າງຕອບດ້ວຍຄວາມຍິນດີ.

ພໍວ່າແລ້ວຄວາມຮູ້ເທົ່າບໍ່ເຖິງການບ່າງຈຶ່ງເຂົ້າໄປ, ເມື່ອຜີນ້ອຍໄດ້ໂອກາດຈຶ່ງອັດທັນທີແລ້ວຈຶ່ງຂູ່ວ່າ:

- ມື້ນີ້ ຄືມື້ສຸດທ້າຍຂອງມຶງແລ້ວ, ກູຈະຂ້າມຶງດຽວນີ້ໂລດ ຖ້າມຶງຢ້ານຕາຍ ມຶງຕ້ອງຮຽກເອົາຂວັນເອື້ອຍໃຫ້ກູມາ.

ຍ້ອນຄວາມຕົກໃຈ ແລະ ຢ້ານຕາຍ ບ່າງຈຶ່ງຮຽກເອົາຂວັນນາງງາມາ ພໍນາງຄືນແລ້ວ ຜີນ້ອຍຍັງລໍ້ຕັດລີ້ນບ່າງອີກ ໂດຍຖາມວ່າ:

- ໂທສ່ຽວ! ສຽງຮ້ອງຂອງໂຕຈັ່ງແມ່ນເຂັດເນາະ, ໂຕພໍບອກເຮົາໄດ້ບໍ່ວ່າມັນເຂັດຍ້ອນຫຍັງ?
- ໂອ! ກໍເຂັດຍ້ອນປາຍລີ້ນເຮົານີ້ຕີ້ວະ ( ບ່າງຕອບດ້ວຍຄວາມທະນົງຕົວ )
- ໂອ! ຄັນຊັ້ນເຮົາຂໍເບິ່ງແດ່ຊິໄດ້ບໍ່? ( ຜີນ້ອຍຖາມຈໍ້ເຂົ້າ )
- ໄດ້! ວ່າແລ້ວບ່າງກໍ່ແລບລີ້ນອອກມາໃຫ້ຜີນ້ອຍເບິ່ງ ຜີນ້ອຍຈຶ່ງຮີບຕັດປາຍລີ້ນທັນທີ ພາຍຫຼັງທີ່ຕັດແລ້ວເພື່ອຄວາມແນ່ໃຈ ຜີນ້ອຍຍັງບອກໃຫ້ບ່າງຮ້ອງທົດລອງອີກ ແຕ່ກໍບໍ່ມີລິດເດດອີຫຍັງໝົດ.

- ຫຼັງຈາກທ້າວພະຍາຕາຍໄປແລ້ວ ຊາວເມືອງເຫັນວ່າ: ທ້າວກໍ່າພ້າເປັນຄົນທີ່ມີຄວາມສາມາດຈິ່ງພ້ອມກັນຍົກທ້າວຂຶ້ນນັ່ງແທນເມືອງຕໍ່ໄປ (ກຽງແກ້ວ ນວນນະວົງ ແລະຄະນະ, 2002).

**6. ເລື່ອງ "ພູທ້າວ ພູນາງ".** (25 ນາທີ)

**ກິດຈະກຳ 2:**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ

1) ເລື່ອງ "ພູທ້າວພູນາງ" ມີເນື້ອໃນແນວໃດ?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (20 ນາທີ)

ຢູ່ເທິງບ້ານຊຽງແມນ ຝັ່ງຂວາຂອງແມ່ນ້ຳຂອງຕໍ່ໜ້າຂອງນະຄອນຫຼວງພະບາງຍັງມີພູສອງໜ່ວຍທີ່ມີຮູບປະພັນເໝືອນມະນຸດ ນອນຫງາຍຢ່າງໜ້າອັດສະຈັນ. ໜ່ວຍໃຕ້ຮຽກວ່າ: ພູພຸດທະເສນ, ໜ່ວຍເໜືອຮຽກວ່າ: ພູນາງກັງຣີ ຮຽກກັນຫຍໍ້ໆວ່າ: "ພູທ້າວພູນາງ".

ນິທານຫຍໍ້ພູສອງໜ່ວຍນີ້ ຄົນລາວບູຮານໄດ້ເລົ່າຕໍ່ກັນມາວ່າ: ແຕ່ຄັ້ງກ່ອນຢູ່ບໍລິເວນອິນທະປັດຖາມີຄົນຕັດຟືນຜູ້ໜຶ່ງທຸກໄຮ້ເຂັນໃຈທີ່ສຸດ, ຊາຍທຸກຜູ້ນັ້ນມີເມຍຜູ້ໜຶ່ງ ແລະ ລູກສິບສອງຄົນ ດ້ວຍຄວາມທຸກຍາກຈົນຫາອັນປຽບບໍ່ໄດ້ຊາຍຕັດຟືນຜູ້ນັ້ນຈຶ່ງເອົາລູກໄປໂຜດທີ່ປ່າເສຍ ນາງສິບສອງຄົນນັ້ນກໍດັ້ນດອນຊອນປ່າຈຶ່ງໄປພົບນາງຍັກໂຕໜຶ່ງຊື່ວ່າ: ສຸນທະລາ ນາງຍັກມີລູກສາວຜູ້ໜຶ່ງຊື່ວ່ານາງກັງຣີ. ນາງຍັກແມ່ໝ້າຍໄດ້ເອົານາງທັງສິບສອງຄົນນັ້ນໄປຢູ່ໃນພະລາຊະວັງເພື່ອໃຫ້ຢູ່ກິນກັບລູກສາວຂອງຕົນເອງ.

ນາງສິບສອງໄດ້ຢູ່ໃນວັງກັບນາງແມ່ໝ້າຍເປັນເວລາຫຼາຍປີຈົນໃຫຍ່ຂຶ້ນມາພໍຊອນສາວ. ວັນໜຶ່ງນາງທັງສິບສອງຄົນໄດ້ພາກັນລັກໜີ. ນາງຍັກກໍຕິດຕາມໄປຈົນພົບແລ້ວນາງສິບສອງຄົນກໍເຂົ້າໄປລີ້ຢູ່ໃນປາກພະຍາງົວຕົວໜຶ່ງ. ເມື່ອຍັກກັບຄືນແລ້ວນາງສິບສອງຈຶ່ງອອກເດີນທາງຕໍ່ໄປ.

ນາງສິບສອງໄປເຖິງນະຄອນຫຼວງເຊິ່ງເປັນເມືອງຂອງທ້າວປາລຸທະເສນ. ພະອົງນີ້ເຫັນນາງທັງຫຼາຍມີຮູບຮ່າງເນື້ອກາຍຈົບງາມ ພະຍາກໍເອົານາງທັງສິບສອງຄົນຂຶ້ນເປັນມະເຫສີ.

ນາງຍັກແມ່ໝ້າຍ ເມື່ອໄດ້ຊາບວ່ານາງສິບສອງໄດ້ເປັນເທວີຂອງພະຍາປາລຸດທະເສນແລ້ວກໍຕາມໄປ. ນາງຍັກຈຳແລງຕົວເປັນນາງມະນຸດທີ່ມີເນື້ອກາຍໜຸ່ມນ້ອຍ ແລະ ງົດງາມທີ່ສຸດ ແລ້ວກໍເຂົ້າໄປໃນພະລາຊະວັງ. ພະຍາປາລຸດທະເສນເຫັນນາງກໍຫຼົງຮັກແລ້ວຍົກນາງຂຶ້ນເປັນອັກຄະມະເຫສີ. ຕໍ່ນັ້ນມາບໍ່ນານ ນາງຍັກແກ້ງເຈັບປ່ວຍຢ່າງໜັກບໍ່ກິນເຂົ້າ ແລະ ນ້ຳ ຈົນຮ່າງກາຍຈ່ອຍຜ່ອມຫຽ່ວແຫ້ງໄປ. ຈຶ່ງບອກໃຫ້ພະຍາປາລຸທະເສນໄປນາໝໍໂຫນ. ນາງຍັກຈຳແລງກາຍ ເປັນແມ່ໝໍໄປຢູ່ຂ້າງໜ້າ. ເມື່ອຄົນໃຊ້ໄປຫາມັນ ມັນທວາຍວ່າ ນາງສິບສອງຄົນເປັນຄົນຂັດຂວາງຖ້າຂັບໄລ່ນາງສິບສອງໜີອອກຈາກພະລາຊະວັງ ແລະ ເຈາະເອົາຕາເຂົາທັງມວນມາສູ່ຂວັນນາງສຸນທະລາຜູ້ເປັນອັກຄະມະເຫສີ ພະຍາດນາງຈຶ່ງຈະຫາຍ ບໍ່ດັ່ງນັ້ນເຫັນຈັກຕາຍໄປບໍ່ສົງກາ.

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ດ້ວຍຄວາມຫຼົງຮັກນາງຍັກ, ພະຍາປາລຸທະເສນຈຶ່ງສັ່ງໃຫ້ບ່າວໄພ່ເຈາະຕານາງສິບສອງແລ້ວເອົາໄປໄວ້ໃນຖໍ້າເລິກແຫ່ງໜຶ່ງ. ນາງຍັກເມື່ອເພິ່ນເອົາຕາມາສູ່ຂວັນຕົນແລ້ວກໍສົ່ງເມື່ອໃຫ້ລູກສາວຂອງຕົນຮັກສາໄວ້ທີ່ເມືອງໄວຍະລັບປະຕິ.

ນາງສິບສອງ ເມື່ອໄດ້ຈາກພະລາຊະວັງພະຍາປາລຸທະເສນໄປ ຜູ້ໃດກໍຖືພາໝົດທຸກຄົນ. ແຕ່ຍ້ອນຄວາມອຶດຢາກ ຕໍ່ມາເມື່ອນາງສິບສອງເກີດລູກອອກມາ ພວກເຂົາຈຶ່ງຈົກລູກອ່ອນປັ່ນກັນກິນ.

ຈະເປັນດ້ວຍການທຳກົນອຸບາຍ ຫຼື ວ່າດ້ວຄວາມເວດທະນາຂອງບ່າວໄພ່ ສວນນາງຫຼ້າເຂົາເຈາະອອກແຕ່ຕາເບື້ອງຊາຍເທົ່ານັ້ນ. ເມື່ອນາງທັງສິບເອັດອອກລູກ ແລະ ປັ່ນມາໃຫ້ກິນນາງຫຼ້າກໍເອົາຫ້ອນໄວ້ບໍ່ກິນ. ພາຍລຸນມາເມື່ອນາງອອກລູກກໍເອົາເນື້ອລູກຂອງນາງທັງສິບເອັດທີ່ຫ້ອນໄວ້ນັ້ນແຈກຢາຍໃຫ້ພວກເອື້ອຍກິນແລ້ວກໍບອກວ່າ: ເປັນພູດລູກຂອງຕົນນັ້ນຕາຍແລ້ວເປື່ອຍເນົ່າອອກມາຕັ້ງແຕ່ໃນທ້ອງ.

ເມື່ອຕໍ່ນັ້ນມາ ແມ່ໄກ່ປ່າໂຕໜຶ່ງທີ່ມີໃຈເມດຕາປານີ ກໍຊອກເອົາເມັດເຂົ້າເປືອກມາລ້ຽງທ້າວນ້ອຍ ແລະ ນາງສິບສອງວັນລະເລັກລະໜ້ອຍພໍບໍ່ໃຫ້ຕາຍ.

ເຖິງເມື່ອທ້າວນ້ອຍໃຫຍ່ຂຶ້ນມາ ນາງຫຼ້າກໍບອກເລົ່າກ່ຽວກັບລູກຂອງນາງສູ່ນາງທັງສິບເອັດຜູ້ເປັນເອື້ອຍຟັງວ່າ: ລູກຂອງຕົນຍັງມີຊີວິດຢູ່. ແຕ່ລະມື້ທ້າວນ້ອຍອອກຈາກຖໍ້າໄປທ່ຽວຕາມໝູ່ບ້ານໃກ້ຄຽງໂດຍໄດ້ຈັບເອົາໄກ່ເຖື່ອນໂຕແຂງແຮງໄປຕີກັບໄກ່ເດັກນ້ອຍຊາວບ້ານ. ພໍຕາເວັນລົງແລງຝູງເດັກນ້ອຍກໍເອົາເຂົ້າ ແລະ ນໍ້າໃຫ້ ແລ້ວທ້າວກໍຫາບມາສູ່ນາງສິບສອງກິນ.

ວັນໜຶ່ງ, ທ້າວນອ້ຍໄດ້ໄປຫຼິ້ນໝາກຮຸກໝາກສະກາໃນນະຄອນຫຼວງ ເຊິ່ງເປັນເມືອງພະຍາພໍ່ແຫ່ງຕົນ ປາລຸທະເສນ ໄດ້ຫົງຊາບວ່າທ້າວນ້ອຍເປັນຜູ້ຊຳນານໃນການຫຼິ້ນ ຈຶ່ງເອີ້ນທ້ານ້ອຍມາຫຼິ້ນໝາກຮຸກໝາກສະການຳ. ພະອົງໄດ້ຖາມເຖິງໂຄດວົງ ທ້າວນ້ອຍໄດ້ທູນຕອບວ່າ: ຕົນໄດ້ເປັນລູກຂອງນາງຈັນທະປະທຸມ ນ້ອງຫຼ້າຂອງນາງສິບສອງ ພະຍາຈຶ່ງຮູ້ຈັກວ່າເປັນລູກຂອງຕົນ. ນັບແຕ່ວັນນັ້ນຕໍ່ໄປ ພະຍາປາລຸທະເສນກໍຫົງຊັກຊວນທ້າວນ້ອຍໃຫ້ມາຢູ່ໃນພະລາຊະວັງນຳພະອົງ. ທ້າວນ້ອຍກໍມາຕາມຄວາມປະສົງຂອງພະຍາ. ແຕ່ວ່າ, ໄດ້ລອບເອົາເຂົ້າປາອາຫານໄປລ້ຽງນາງສິບສອງຢູ່ບໍ່ຂາດວັນ, ພະຍາປາລຸທະເສນໄດ້ຕັ້ງຊື່ໃຫ້ທ້າວນ້ອຍວ່າ: ພຸດທະເສນ.

ຕໍ່ມາບໍ່ນານ, ນາງຍັກຜູ້ຈຳແລງຕົວເປັນອັກຄະມະເຫສີຂອງພະຍາປາລຸທະເສນກໍຮູ້ຈັກວ່າ: ທ້າວພຸດທະເສນເປັນລູກຂອງນາງຫຼ້າ ຈຶ່ງຊອກຂ້າທ້າວນ້ອຍດ້ວຍອຸບາຍເລກົນຂອງນາງ ນາງຈຶ່ງທຳເປັນປ່ວຍໜັກອີກແລ້ວທູນພະຍາປາລຸທະເສນຜູ້ເປັນຜົວວ່າ: ມີແຕ່ຢາເຊິ່ງມີຢູ່ໃນເມືອງໄວຍະລັບປະຕິ ຄືເມືອງເດີມຂອງນາງຢ່າງດຽວທີ່ຈະເອົາຊີວິດຂອງນາງໄວ້ໄດ້ ແລະ ຜູ້ຈະໃຊ້ໃຫ້ໄປເອົາຢານັ້ນນາງແລເຫັນແຕ່ທ້າວພຸດທະເສນຄົນດຽວເຊິ່ງມີຄວາມສາມາດ ພະຍາປາລຸທະເສນກໍໄດ້ໃຊ້ທ້າວພຸດທະເສນໄປເອົາຢາຕາມຄຳປະສົງຂອງນາງຍັກ.

ທ້າວພຸດທະເສນເລືອກເອົາມ້າຕົວໜຶ່ງແຂງແຮງທີ່ສຸດ ເຫາະເຫີນເດີນອາກາດໄດ້. ກ່ອນຈະອອກເດີນທາງໄປນາງຍັກໄດ້ມອບໜັງສືໃຫ້ທ້າວສະບັບໜຶ່ງ ແລ້ວກ່າວວ່າ: ໃຫ້ເຈົ້າເອົາໜັງສືສະບັບນີ້ເມືອໃຫ້ນາງກັງຣີ. ເມື່ອນາງໄດ້ອ່ານໜັງສືສະບັບນີ້ແລ້ວ ເຈົ້າໄດ້ຈະໄດ້ຮັບສິ່ງເພິ່ງພໍໃຈຂອງເຈົ້າເປັນອັນມາກ.

ທ້າວພຸດທະເສນຮັບເອົາໜັງສືຈາກນາງຍັກ ມັດແຂນຄໍມ້າ ແລ້ວກໍອອກເດີນທາງໄປ ວັນໜຶ່ງໃກ້ຈະເຖິງເມືອງໄວຍະລັບປະຕິ ດ້ວຍເຫດວ່າ ທ້າວເດີນທາງອິດອ່ອນເມື່ອຍໜັກ ເມື່ອມາຮອດອາສົມບົດລືສີແຫ່ງໜຶ່ງທ້າວກໍລົງຈາກມ້າເຊົາເມື່ອຍເອົາແຮງຢູ່ກ້ອງຕົ້ນໂພໄຊແລ້ວທ້າວ ແລະ ມ້າກໍພາກັນຫຼັບໄປ.

ລືສີໄດ້ມາພົບ ແລະ ເຫັນກັບໜັງສືມັດແຂວນຄໍມ້າກໍມີຄວາມສົນໃຈ ຈຶ່ງຕັດເຊືອກເອົາໜັງສືອອກມາອ່ານມີໃຈຄວາມວ່າ: ດູລານາງກັງຣີ ຄັນວ່າຊາຍນ້ອຍຄົນນີ້ໄປຮອດໄປເຖິງເມື່ອໃດມຶງນາງຈົ່ງກິນຊາຍນ້ອຍຜູ້ນີ້ເສຍຢ່າໄວ້.

ລືສີເຫັນໄພອັນຕະລາຍ ຈະມາເຖິງທ້າວນ້ອຍ ຈຶ່ງລຶບເນື້ອຄວາມທີ່ກ່າວມານີ້ ແລ້ວແກ້ໄຂດ້ວຍເນື້ອຄວາມໃໝ່ວ່າ: ຊາຍນ້ອຍຜູ້ນີ້ ເປັນລູກແຫ່ງນາງສຸນທະລາ ຫາກໄດ້ສົ່ງມາໃຫ້ເປັນຜົວແຫ່ງມຶງນາງ ຄັນວ່າຊາຍຫາກມາເຖິງເມື່ອໃດໃຫ້ມຶງນາງແຕ່ງແປງຕ້ອນຮັບແລ້ວໃຫ້ມຶງນາງອະພິເສກເອົາທ້າວເປັນຜົວ ໂດຍສະຫວັດດີເທີ້ນ.

ທ້າວພຸດທະເສນເດີນທາງຕໍ່ໄປຮອດເມືອງໄວລັບປະຕິ ນາງກັງຣີ ເປີດໜັງສືຂອງແມ່ອອກມາອ່ານ ແລ້ວກໍຮັບເອົາທ້າວພຸດທະເສນດ້ວຍຄວາມພໍໃຈ ເພາະວ່າທ້າວພຸທະເສນມີຮູບໂສມຕະໂນມພັນອັນງົດງາມມາກ ເວລາເອົາກັນແລ້ວ ນາງກັງຣີກໍພາຜົວຂອງຕົນໄປຊົມສວນອຸທິຍານ ແລະ ແນະນຳໃຫ້ຮູ້ຂອງດີວິເສດທຸກສິ່ງທຸກປະການ ເປັນຕົ້ນວ່າ: ຫວ້ານຫຼາຍຊະນິດເມື່ອຂວ່າງໄປເປັນປ່າໄຜ່ໜາມ, ເປັນໜອງ, ເປັນໄຟເຜົາແຜ່ນດິນ ແລະ ເປັນແມ່ນໍ້າໃຫຍ່ ແລະຢ່າງອື່ນໆ.

ຮູ້ຈັກດັ່ງນີ້ແລ້ວ ທ້າວພຸດທະເສນກໍດີໃຈ ຈຶ່ງຊອກຊ່ອງທາງຈະລັກໜີຈາກນາງກັງຣີ ກັບໄປນະຄອນຫຼວງ. ວັນໜຶ່ງທ້າວໄດ້ສັ່ງໃຫ້ນາງກັງຣີຈັດການຫຼິ້ນມະຫໍລະສົບຄົບງັນໃຫ້ບ່າວໄພທັງເມືອງໄດ້ຊຸມເຂົ້າ, ຊຸມເຫຼົ້າມ່ວນຊື່ນ ສ່ວນທ້າວກໍເອົາເຫຼົ້າແຈກນາງກັງຣີຫຼາຍໆ ນາງເມົາເຫຼົ້າແລ້ວກໍພາກັນນອນຫຼັບໄປຢ່າງບໍ່ຮູ້ເມື່ອຄືງ.

ທ້າວພຸດທະເສນເຫັນນາງກັງຣີ ແລະ ໄພ່ພົນຍັກນອນຫຼັບງຽບສະຫງັດແລ້ວ ທ້າວກໍເຂົ້າໄປເອົາກົງໃຈນາງຍັກສຸນທະລາ, ເອົາຕານາງສິບສອງ, ເອົາໝາກເວີ່ຮູ້ຫາວເອົາໝາກນາວຮູ້ໂຫ່ ແລະ ຫວ້ານດີວິເສດຫຼາຍຊະນິດແລ້ວທ້າວກໍຂຶ້ນຂີ່ມ້າລັກໜີ ໄປທາງກາງຄືນ. ເມື່ອນາງກັງຣີສວ່າງເຫຼົ້າຮູ້ສຶກຄືນມາ ຊອກຫາຜົວບໍ່ເຫັນກໍເອົາລີພົ່ນອອກຕິດຕາມ ທ້າວພຸດທະເສນ ເຫັນດັ່ງນັ້ນ ກໍເອົາຫວ້ານດີວິເສດຂວ່າງໄປເກີດເປັນປ່າໄຜ່ໜາມ, ເປັນໜອງ, ເປັນໄຟເຜົາແຜ່ນດິນ ຕັນທາງທີ່ນາງຈະຕິດຕາມມາ. ນາງກໍເອົາລີພົ່ນຟັນປ່າຖົມໜອງ ແລ້ວມອດໄຟ ຕິດຕາມມາ. ທ້າຍສຸດທ້າວກໍເອົາຫວ້ານຊະນິດໜຶ່ງຂວ່າງໄປເປັນແມ່ນໍ້າໃຫຍ່ມີພຸເຝືອນແປວໄຫຼຟອງຟາດ.

ນາງກັງຣີ ເມື່ອມາເຖິງແຄມນໍ້ານີ້ ກໍຕິດຕາມໄປບໍ່ໄດ້ນາງຈຶ່ງເອີ້ນຫາຜົວໃຫ້ກັບຄືນ ດ້ວຍຄວາມສະເໜ່ຫາຮັກທ້າວບໍ່ກັບມາ ນາງຈຶ່ງເອົາໄພພົນກັບມາສູ່ເມືອງແຫ່ງຕົນ. ນາງມີຄວາມໂທມະນັດຂັດແຄ້ນແໜ້ນທ້ອໃຈເປັນທີ່ສຸດ ບໍ່ກິນເຂົ້າ, ນໍ້າ ແລະ ອາຫານແລ້ວ ກໍຕາຍໄປ ກ່ອນໃຈຈະຂາດນາງໄດ້ໄຫວ້ວອນເທວະດາຂໍຜູກກຳໝາຍເວນແກ່ຜົວ ຂໍໃຫ້ທ້າວຈົ່ງຕາຍດ້ວຍສະເໜ່ຫາຮັກເໝືອນດັ່ງນາງ .

ທ້າວພຸດທະເສນເມື່ອໄປຮອດນະຄອນຫຼວງແລ້ວ ກໍໄປສູ່ທີ່ຢູ່ແມ່ ແລະ ປ້າຂອງຕົນ. ເອົາໝາກເວີ່ຮູ້ຫາວເອົາໝາກນາວຮູ້ໂຫ່ບີບໃສ່ໜ່ວຍຕາຂອງນາງສິບສອງ ແລ້ວກໍຮຸ່ງແຈ້ງດັ່ງເດີມ. ເສັດແລ້ວທ້າວກໍເຂົ້າໄປໄຫວ້ພະຍາພໍ່ແຫ່ງຕົນໃນພະລາຊະວັງ. ນາງຍັກສູນທະລາ ມາບເຫັນກໍອັດສະຈັນ ເພາະວ່າຕົນໄດ້ຂຽນໜັງສືໃຫ້ນາງກັງຣີຈົກກິນທ້າວແລ້ວເປັນປະການໃດຈຶ່ງບໍ່ກິນ ແລະ ກັບຄືນມາໄດ້. ດ້ວຍຄວາມພິໂລດໂກດແຄ້ນນາງຈຶ່ງກາຍຮູບເປັນຍັກ ເໝືອນ

ເດີມແລ້ວກໍໂດດໄປຈະຈິກກິນທ້າວພຸທະເສນ. ທ້າວພຸດທະເສນກໍເອົາດາບຕັດກົງໃຈຂອງນາງຍັກໃຫຍ່ໃຫ້ຂາດ ນາງຍັກຈຶ່ງລົ້ມຕາຍໄປໃນຂະນະນັ້ນ.

ເມື່ອນາງຍັກສຸນທະລາຕາຍແລ້ວ ທ້າວພຸທະເສນກໍເອີ້ນຍັງແມ່ ແລະ ປ້າແຫ່ງຕົນກັບເຂົ້າມາພະລາຊະວັງນຳພະຍາປາລຸທະເສນຕົນເປັນພໍ່ດັ່ງເດີມ.

ເສັດແລ້ວທ້າວກໍລາພະຍາຕົນພໍ່ແມ່ ແລະ ປ້າກັບຄືນເມືອຫານາງກັງຣີຜູ້ເປັນເມຍ ພໍໄປເຖິງເມືອງໄວຍະລັບປະຕິ ກໍເຫັນນາງກັງຣີຕາຍຢູ່. ດ້ວຍຄວາມຜູກກຳໝາຍເວນຂອງນາງກັງຣີດັ່ງກ່າວແລ້ວ ທ້າວກໍເກີດຄວາມສະເໜ່ຫາຮັກນາງຢ່າງທີ່ສຸດມີຄວາມຄັບແຄ້ນແໜ້ນໃຈບໍ່ອາດຈະຕັ້ງຕົນຢູ່ໄດ້ ຈຶ່ງສະຫຼົບທົບທ່າວລົງແລ້ວກໍຂາດໃຈຕາຍນຳນາງກັງຣີ.

ເມື່ອທ້າວພຸດທະເສນຕາຍໄປນັ້ນ ໄດ້ເອົາຫໍວມູນຕົນນາງກັງຣີຢູ່ ເທບໃຫ້ຢູ່ໃນສະຫວັນລົງເຫັນດັ່ງນັ້ນ ຈຶ່ງພິຈາລະນາເຫັນວ່າ ເປັນສິ່ງບໍ່ຄວນດ້ວຍຕໍ່ໄປໃນພາຍໜ້າ ຜູ້ຍິງຈະຂົ່ມຜູ້ຊາຍເກີນໄປ ຈຶ່ງລົງມາຕ່າວສົບທ້າວພຸດທະເສນ.

ຄົນລາວບູຮານ ຈຶ່ງເລົ່ານິທານສືບກັນມາວ່າສົບຂອງທ້າວພຸດທະເສນ ແລະ ນາງກັງຣີໄດ້ກາຍເປັນພູທ້າວພູນາງ ແລະ ບ່ອນລືສີຕັດເຊືອກເອົາໜັງອອກຈາກຄໍມ້າແລ້ວແກ້ໄຂໃຈຄວາມນັ້ນແມ່ນຜາຕັດແກ້ ເຊິ່ງຢູ່ຝັ່ງຂວາຂອງແມ່ນໍ້າຂອງໜ້າພະນະຄອນຫຼວງພະບາງ ສວນອຸທິຍານນາງກັງຣີນັ້ນວ່າ ແມ່ນທີ່ດິນຄ້າຍທະຫານໃນເວລານີ້. ເຊິ່ງແຕ່ກ່ອນຮຽກວ່າ: “ສວນແຖນ” ມີພືກສາໝາກໄມ້ ອັນກິນແຊບຫຼາຍປະການ ແລະ ມີດອກໄມ້ງົດງາມຫຼາຍຊະນິດເປັນບ່ອນສຳລານບານໃຈມາກໜັກ.

ເມື່ອທ້າວພຸດທະເສນເກັບເອົາໝາກເວີ່ຮູ້ຫາວໝາກນາວຮູ້ໂຫ່ນັ້ນ ທ້າວຟ້າວໄປທີ່ສຸດ ມາກໄມ້ເຫົ່ານັ້ນກໍເຮ່ຍຫາຍໄປຈຶ່ງກາຍໄປຫາດໝາກນາວໃນກາລະບັດນີ້.

ວິນຍານຂອງນາງກັງຣີຕາມທີ່ເລົ່າກັນມາ ກໍຍັງມາສູນນາງທຽມທີ່ບ້ານຊຽງແມນຈົນກາລະບັດນີ້ (ບຸນລ້ອມ ສີບຸນເຮືອງ ແລະຄະນະ, 2014).

**III. ຂັ້ນສະຫຼຸບ**

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**
  - ເລື່ອງ “ກຳພ້າຜີນ້ອຍ”
  - ເລື່ອງ “ພູທ້າວພູນາງ”

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

**V. ຂັ້ນຕັກເຕືອນ**

- ຄູແນະນຳນັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

**ເອກະສານອ້າງອີງ**

ກຽງແກ້ວ ນອນນະວົງ ແລະຄະນະ. (2002). ວັນນະຄະດີພື້ນເມືອງ 1 ລະຫັດ 630LLI 322. ຄະນະອັກສອນສາດ. ມະຫາວິທະຍາໄລແຫ່ງຊາດ.

ບຸນລ້ອມ ສີບຸນເຮືອງ ແລະຄະນະ. (2014). ແບບຮຽນວັນນະຄະດີ ຊັ້ນມັດທະຍົມສຶກສາປີທີ 5. ກະຊວງສຶກສາທິການ ແລະກິລາ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ຄູສອນປະຈຳວິຊາ



ປທ. ສົມທະເພີຍ ສີວົງສັກ